ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງກະສິກຳ ແລະ ປ່າໄມ້

ເລກທີ: 0945/ກປ

ນະຄອນຫຼວງວຽງຈັນ, ວັນທີ: 05 SEP 2018

## ແຈ້ງການ

### ກ່ຽວກັບການໂຈະຊົ່ວຄາວ ການນຳເຂົ້າໝູຊີ້ນ, ໝູພໍ່ແມ່ພັນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູທຸກຊະນິດ ຈາກ ສປ ຈີນ ເຂົ້າສູ່ ສປປ ລາວ

ເຖິງ: - ທ່ານ ຫົວໜ້າກົມລ້ຽງສັດ ແລະ ການປະມົງ;

- ທ່ານ ຫົວໜ້າຫ້ອງວ່າການປົກຄອງນະຄອນຫຼວງວຽງຈັນ ແລະ ບັນດາແຂວງ;
- ທ່ານ ຫົວໜ້າພະແນກກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ ແລະ ບັນດາແຂວງ ໃນຂອບເຂດທົ່ວປະເທດ.

- ອີງຕາມ ກົດໝາຍວ່າດ້ວຍການລ້ຽງສັດ ແລະ ການສັດຕະວະແພດ (ສະບັບປັບປຸງ) ສະບັບເລກທີ 08/ສພຊ, ລົງວັນທີ 11 ພະຈິກ 2016;
- ອີງຕາມ ດຳລັດ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ຂອງກະຊວງກະສິກຳ ແລະ ປ່າໄມ້ ເລກທີ 99/ນຍ, ລົງວັນທີ 09 ມີນາ 2017;
- ອີງຕາມ ການລາຍງານຂອງອົງການສຸຂະພາບສັດສາກົນ ກ່ຽວກັບສະພາບການລະບາດ ຂອງພະຍາດອະຫິວາໝູອາຟຣິກາ ທີ່ກຳລັງມີການລະບາດ ຢູ່ແຂວງ ຫຼຽວໜີງ ສປ ຈີນ;
- ອີງຕາມ ການຄົ້ນຄວ້າ ແລະ ນຳສະເໜີ ຂອງກົມລ້ຽງສັດ ແລະ ການປະມົງ ຄັ້ງວັນທີ 31 ສິງຫາ 2018.

ອົງການສຸຂະພາບສັດສາກົນ ໄດ້ລາຍງານ ແລະ ແຈ້ງໃຫ້ຊາບວ່າ: ພະຍາດອະຫິວາໝູອາຟຣິກາ ແມ່ນພະຍາດລະບາດຂອງໝູ ທີ່ເກີດມາຈາກເຊື້ອໄວຣັສຕະກຸນ Iridoviridae ເຊື້ອໄວຣັສດັ່ງກ່າວນີ້ ມີຄວາມທົນທານສູງຕໍ່ສະພາບແວດລ້ອມ, ມີຊີວິດທົນຢູ່ໄດ້ໃນເງື່ອນໄຂທີ່ມີຄວາມເປັນກົດເປັນດ່າງສູງ ໃນລະດັບ ph: 3,9-11,5, ຢູ່ໃນຊາກສັດແຊ່ແຂງໄດ້ດົນ ເຖິງ 15 ປີ ແລະ ສາມາດຖືເຊື້ອຢູ່ໃນໝູໄດ້ ເຖິງ 4 ປີ.

ພະຍາດອະຫິວາໝູອາຟຣິກາ ສາມາດຕິດຕໍ່ໄດ້ຈາກການສຳຜັດກັບໝູຕິດເຊື້ອໂດຍກົງ ຫຼື ທາງອ້ອມ ໂດຍຜ່ານຄົນ, ອຸປະກອນ, ພາຫະນະ, ອາຫານສັດ ແລະ ຜ່ານພາຫະນຳເຊື້ອ ຈຳພວກເຫັບ, ເຫົາ; ມີໄລຍະຟັກເຊື້ອ 48-72 ຊົ່ວໂມງ ໂດຍມີອາການແບບຕາຍຢ່າງກະທັນຫັນ ແລະ ແບບຊໍ້າເຮື້ອ, ສັດທີ່ເປັນພະຍາດຈະມີໄຂ້ສູງເຖິງ 42 ອົງສາເຊ; ໃບຫູ, ຜີວໜັງ ອາດພົບເປັນປ່ານແດງຄ້ຳ, ມີຈຸດເນື້ອຕາຍເປັນຈຸດ ຢູ່ຕາມຜີວໜັງ

ຖິ່ນທ້ອງ ອັດຕາການຕາຍຂອງໝູ ເຖິງ 90% ຍັງບໍ່ມີຢາປ້ອງກັນ ແລະ ປິ່ນປົວເທື່ອ. ພະຍາດນີ້, ເກີດການລະບາດຄັ້ງທຳອິດ ໃນປີ 1909 ໃນທະວີບອາຟຣິກາ ຕໍ່ມາ ໄດ້ເກີດລະບາດຢູ່ຫຼາຍປະເທດ ໃນທະວີບເອີຣົບ ແລະ ອາຊີ.

ໃນມໍ່ໆມານີ້ ໄດ້ເກີດການລະບາດ ຢູ່ໃນຟາມລ້ຽງໝູ ຂອງແຂວງຫຼຽວໜິງ ສປ ຈີນ (ລາຍງານຈາກ ອົງການສຸຂະພາບສັດສາກົນ OIE). ສະເພາະ ສປປ ລາວ ພວກເຮົາ ບໍ່ເຄີຍເກີດການລະບາດຂອງພະຍາດດັ່ງກ່າວ ຈັກເທື່ອ. ສະນັ້ນ, ເພື່ອປ້ອງກັນ ແລະ ສະກັດກັ້ນ ບໍ່ໃຫ້ພະຍາດແຜ່ລະບາດ ເຂົ້າສູ່ ສປປ ລາວ.

## ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້ ອອກແຈ້ງການ:

1) ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ສົມທົບກັບ ພະແນກກະສິກຳ ແລະ ປ່າໄມ້, ອົງການປົກຄອງທ້ອງຖິ່ນ, ບັນດາດ່ານຊາຍແດນ ເຜີຍແຜ່ແຈ້ງເຕືອນໃຫ້ເຈົ້າໜ້າທີ່, ຜູ້ປະກອບການ, ພະນັກງານ, ທະຫານ, ຕຳຫຼວດ ແລະ ປະຊາຊົນ ຮັບຊາບ ຢ່າງທົ່ວເຖິງ ຕໍ່ກັບເຫດຜົນ ແລະ ຄວາມຈຳເປັນ ໃນການໃຈະຊື້ຕາວ ການນຳເຂົ້າ ແລະ ຄວາມອັນຕະລາຍຮ້າຍແຮງ ຂອງພະຍາດດັ່ງກ່າວ;
2) ໃຫ້ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫລວງວຽງຈັນ ແລະ ບັນດາແຂວງ ໂດຍສະເພາະ ແຂວງທີ່ມີຊາຍແດນຕິດຈອດກັບ ສປ ຈີນ ເຊັ່ນ: ແຂວງບໍ່ແກ້ວ, ຫຼວງນ້ຳທາ, ອຸດົມໄຊ ແລະ ແຂວງຜົ້ງສາລີ ໃຈະຊື້ຕາວ ການອະນຸມັດ ແລະ ອະນຸຍາດນຳເຂົ້າໝູຊີ້ນ, ໝູພໍ່ແມ່ພັນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູທຸກຊະນິດ ຈາກ ສປ ຈີນ ເຂົ້າມາບໍລິໂພກ ຫຼື ມາລ້ຽງພາຍໃນແຂວງ ແລະ ນະຄອນຫລວງວຽງຈັນ ຢ່າງເຂັ້ມງວດ;
3) ໃຫ້ເພີ່ມທະວີມາດຕະການຕິດຕາມ ກວດກາ ແລະ ບໍ່ອະນຸຍາດໃຫ້ນຳເຂົ້າຜະລິດຕະພັນຊີ້ນໝູທຸກຊະນິດ ເພື່ອມາຈຳໜ່າຍ ຫຼື ບໍລິໂພກ ລວມທັງການນຳເຂົ້າຕິດຕາມຕົວຜູ້ໂດຍສານ ຫຼື ຜູ້ເດີນທາງເຂົ້າມາ ໃນ ສປປ ລາວ ເພື່ອບໍລິໂພກສ່ວນຕົວ ຫຼື ໃນຄອບຄົວ ຢ່າງເດັດຂາດ;
4) ໃນກໍລະນີ ທີ່ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ຫາກກວດພົບເຫັນຜູ້ລະເມີດ ຝ່າຝືນນຳເຂົ້າ ຫຼື ລັກລອບນຳເຂົ້າໝູຊີ້ນ, ໝູພໍ່ແມ່ພັນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູທຸກຊະນິດ ທີ່ບໍ່ຖືກຕ້ອງ ໃຫ້ສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ປະຕິບັດມາດຕະການຕາມກົດໝາຍ ແລະ ລະບຽບການ ຢ່າງເຂັ້ມງວດ. ສຳລັບໝູຊີ້ນ, ໝູພໍ່ແມ່ພັນ, ໝູນ້ອຍ ແລະ ຜະລິດຕະພັນຊີ້ນໝູທຸກຊະນິດ ທີ່ເປັນຂອງກາງ ໃຫ້ກວດຍຶດ ແລ້ວນຳໄປທຳລາຍຖິ້ມ ດ້ວຍການເຜົາ ຫຼື ຝັງ ສ່ວນຜູ້ທີ່ລະເມີດ ໃຫ້ກ່າວເຕືອນ, ປັບໄໝ ຫຼື ດຳເນີນຄະດີທາງແພ່ງ ຫຼື ທາງອາຍາ ຕາມແຕ່ລະກໍລະນີເບົາ ຫຼື ໜັກ ຕາມທີ່ກຳນົດໄວ້ ໃນກົດໝາຍ ແລະ ລະບຽບການ;
5) ໃຫ້ພະແນກກະສິກຳ ແລະ ປ່າໄມ້ ນະຄອນຫຼວງວຽງຈັນ ແລະ ບັນດາແຂວງ ສົມທົບກັບ ຂະແໜງການກ່ຽວຂ້ອງ, ກຸ່ມຜະລິດ, ຜູ້ປະກອບການ, ສະມາຄົມລ້ຽງສັດ ຫຼື ລົ້ງໝູປະຈຳທ້ອງຖິ່ນ ສ້າງແຜນດຸ່ນດ່ຽງຄວາມຕ້ອງການໃນການຜະລິດໝູພາຍໃນ ຢ່າງຮອບດ້ານ ເພື່ອຫຼຸດຜ່ອນການນຳເຂົ້າ ຈາກຕ່າງປະເທດ ຖ້າແຂວງໃດ ເຫັນວ່າ ການສະໜອງໝູ ຍັງບໍ່ພຽງພໍກັບຄວາມຕ້ອງການບໍລິໂພກພາຍໃນແຂວງຂອງຕົນ ໃຫ້ມີວພັນ ນຳກົມລ້ຽງສັດ ແລະ ການປະມົງ ຫຼື ຂະແໜງລ້ຽງສັດ ແລະ ການປະມົງ ນະຄອນຫລວງວຽງຈັນ ຫຼື ບັນດາແຂວງ ທີ່ຜະລິດໝູເກີນຄວາມຕ້ອງການ ຈະເປັນຜູ້ອຳນວຍຄວາມສະດວກ ໃນການຈັດຫາໝູ ເພື່ອຕອບສະໜອງໃຫ້;

6) ມອບໃຫ້ກົມລ້ຽງສັດ ແລະ ການປະມົງ ເປັນຜູ້ອອກຄຳແນະນຳທາງດ້ານວິຊາການ ໃຫ້ເຈົ້າໜ້າທີ່ສັດຕະວະແພດປະຈຳດ່ານ ແລະ ທຸກພາກສ່ວນກ່ຽວຂ້ອງພາຍໃນດ່ານ ເພື່ອຄວາມເອກະພາບໃນການປະຕິບັດ, ພ້ອມດຽວກັນ ກໍໃຫ້ຕິດຕາມ, ກວດກາ ແລະ ລາຍງານຜົນການຈັດຕັ້ງປະຕິບັດ ໃຫ້ການນຳກະຊວງຮັບຊາບ;

7) ແຈ້ງການສະບັບນີ້, ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ ຈົນກວ່າສະພາບຈະກັບສູ່ປົກກະຕິ ຈຶ່ງຈະປະກາດຍົກເລີກ ແຈ້ງການສະບັບນີ້.

ລັດຖະມົນຕີ ກະຊວງກະສິກຳ ແລະ ປ່າໄມ້

ປອ.ລຽນ ທິແກ້ວ

**ບ່ອນນຳສົ່ງ:**

| | | |
|---|---|---|
| 1. | ຫສນຍ | 01 ສະບັບ (ໃຫ້ການລາຍງານ); |
| 2. | ຫ້ອງການກະຊວງອຸດສາຫະກຳ ແລະ ການຄ້າ | 01 ສະບັບ (ເພື່ອຊາບ ແລະ ຂໍຄວາມຮ່ວມມື); |
| 3. | ຫ້ອງການກະຊວງ ກປ | 02 ສະບັບ; |
| 4. | ບັນດາດ່ານສາກົນ ແລະ ດ່ານທ້ອງຖິ່ນ ປະເພດ | 01 ສະບັບ (ເພື່ອປະຕິບັດ); |
| 5. | ກົມ, ສະຖາບັນ ແລະ ອົງການຈັດຕັ້ງຂັ້ນແຂວງ | 01 ສະບັບ; |
| 6. | ເກັບສຳຮອງໄວ້ | 01 ສະບັບ. |